ສາລະບານ

ໝວດທີ 1 ບົດບັນຍັດທົ່ວໄປ ........ 1
ມາດຕາ 1 ຈຸດປະສົງ ........ 1
ມາດຕາ 2 ການອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ........ 1
ມາດຕາ 3 ການອະທິບາຍຄຳສັບ ........ 2
ໝວດທີ 2 ການອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ........ 2
ມາດຕາ 4 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ........ 2
ມາດຕາ 5 ສຳນວນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ........ 2
ມາດຕາ 6 ຂັ້ນຕອນການຍື່ນຄຳຮ້ອງ ........ 3
ມາດຕາ 7 ການພິຈາລະນາອອກໃບອະນຸຍາດ ........ 3
ມາດຕາ 8 ອາຍຸຂອງໃບອະນຸຍາດ ........ 3
ມາດຕາ 9 ການຕໍ່ອາຍຸ ຫຼື ປ່ຽນແປງ ........ 3
ມາດຕາ 10 ການໂຈະ ຫຼື ຖອນ ໃບອະນຸຍາດ ........ 3
ໝວດທີ 3 ການຄຸ້ມຄອງ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ........ 4
ມາດຕາ 11 ອົງການຄຸ້ມຄອງ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ........ 4
ມາດຕາ 12 ສິດ ແລະ ໜ້າທີ່ຂອງ ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ........ 4
ມາດຕາ 14 ສິດ ແລະ ໜ້າທີ່ ຂອງບໍລິສັດຜູ້ຕາງໜ້າ ........ 4
ໝວດທີ 4 ຂໍ້ຫ້າມ ........ 5
ມາດຕາ 15 ຂໍ້ຫ້າມສຳລັບພະນັກງານຄຸ້ມຄອງ ........ 5
ມາດຕາ 16 ຂໍ້ຫ້າມສຳລັບບໍລິສັດຜູ້ຕາງໜ້າ ........ 5
ໝວດທີ 5 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ........ 6
ມາດຕາ 17 ນະໂຍບາຍຕໍ່ຜູ້ມີຜົນງານ ........ 6
ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ ........ 6
ມາດຕາ 19 ມາດຕະການສຶກສາອົບຮົມ ........ 6
ມາດຕາ 20 ມາດຕະການປັບໃໝ ........ 6
ມາດຕາ 21 ມາດຕະການ ໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ... 7
ໝວດທີ 6 ບົດບັນຍັດສຸດທ້າຍ ........ 7
ມາດຕາ 22 ການຈັດຕັ້ງປະຕິບັດ ........ 7
ມາດຕາ 23 ຜົນສັກສິດ ........ 7

(ຮ່າງ 27/04/2022)

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ. /ອຄ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ) ຂໍ້ຕົກລົງ
# ວ່າດ້ວຍ ການອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ , ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ..... ..../ກຊປ.ອຄ, ລົງວັນທີ……………..

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ເປັນຕົ້ນ ກຳນົດມາດຖານ, ເງື່ອນໄຂ, ຂັ້ນຕອນ ການອະນຸຍາດດຳເນີນທຸລະກິດ, ກວດກາ ການບໍລິການຈົດທະບຽນຊັບສິນທາງປັນຍາ ແນໃສ່ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ກົດໝາຍ ວ່າດ້ວຍວິສາຫະກິດ ກ່ຽວກັບ ການບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ເປັນເອກະພາບໃນທົ່ວປະເທດ.

**ມາດຕາ 2 ການອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ**

ການອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ແມ່ນການອະນຸຍາດໃຫ້ນິຕິບຸກຄົນທີ່ດຳເນີນທຸລະກິດທາງດ້ານກົດໝາຍ ຢ່າງຖືກຕ້ອງ ແລະ ມີທີ່ຢູ່ໃນ ສປປ ລາວ ໃນການດຳເນີນທຸລະກິດ ເປັນຜູ້

ຕາງໜ້າໃຫ້ເຈົ້າຂອງສິດຊັບສິນທາງປັນຍາ ເພື່ອດຳເນີນການຕ່າງໆ ນຳກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍລິສັດຜູ້ຕາງໜ້າ** ໝາຍເຖິງ ນິຕິບຸກຄົນ ທີ່ດຳເນີນທຸລະກິດທາງດ້ານກົດໝາຍທີ່ຖືກຕ້ອງ ຢູ່ ສປປ ລາວ ເພື່ອດຳເນີນທຸລະກຳ ທີ່ກ່ຽວຂ້ອງກັບວຽກງານຊັບສິນທາງປັນຍາ;
2. **ການບໍລິການຈົດທະບຽນຊັບສິນທາງປັນຍາ** ໝາຍເຖິງ ການໃຫ້ບໍລິການ ດຳເນີນການຍື່ນຄຳຮ້ອງ, ຄຳສະເໜີ ແລະ ດຳເນີນການອື່ນ ກ່ຽວກັບ ການຈົດທະບຽນຊັບສິນທາງປັນຍາ, ລວມທັງເປັນຜູ້ຕາງໜ້າໃຫ້ເຈົ້າຂອງຊັບສິນທາງປັນຍາ ໃນການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ;
3. **ໃບອະນຸຍາດດຳເນີນທຸລະກິດບໍລິການຊັບສິນທາງປັນຍາ** ໝາຍເຖິງ ເອກະສານທີ່ໃຊ້ຢັ້ງຢືນການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ທີ່ອອກໃຫ້ໂດຍກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ.

## ໝວດທີ 2
## ການອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ

**ມາດຕາ 4 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ**

ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ຕ້ອງມີດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນທຸລະກິດທາງດ້ານກົດໝາຍ ຢູ່ ສປປ ລາວ;
2. ມີປະສົບການໃນການເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຢ່າງໜ້ອຍ 2 ປີ ຫຼື ຜ່ານການຝຶກອົບຮົມ ກ່ຽວກັບ ຊັບສິນທາງປັນຍາ ພາຍໃນ ຫຼື ຕ່າງປະເທດທີ່ຮັບຮູ້ໂດຍອົງການຈັດຕັ້ງທີ່ກ່ຽວຂ້ອງ ຂອງເຈົ້າຂອງວິສາຫະກິດ ຫຼື ພະນັກງານ ຢ່າງໜ້ອຍ 2 ຄົນຂຶ້ນໄປ;
3. ຜ່ານການຝຶກອົບຮົມ ກ່ຽວກັບ ການບໍລິການຊັບສິນທາງປັນຍາ ໃຫ້ແກ່ ເຈົ້າຂອງວິສາຫະກິດ ຫຼື ພະນັກງານ ຢ່າງໜ້ອຍ 2 ຄົນຂຶ້ນໄປ ຊຶ່ງຮັບຮູ້ໂດຍກົມຊັບສິນທາງປັນຍາ.

**ມາດຕາ 5 ສຳນວນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ**

ສຳນວນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ປະກອບມີ:

1. ຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດທາງດ້ານກົດໝາຍ ທີ່ອອກໃຫ້ໂດຍກະຊວງຍຸຕິທຳ;
4. ສຳເນົາໃບຢັ້ງຢືນ ປະສົບການໃນການເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຫຼື ຈົບຫຼັກສູດການຝຶກອົບຮົມ ກ່ຽວກັບ ຊັບສິນທາງປັນຍາ ພາຍໃນ ຫຼື ຕ່າງປະເທດ ຂອງເຈົ້າຂອງວິສາຫະກິດ ຫຼື ພະນັກງານ;
5. ສຳເນົາໃບຢັ້ງຢືນ ຈົບຫຼັກສູດການຝຶກອົບຮົມ ກ່ຽວກັບ ການບໍລິການຊັບສິນທາງປັນຍາ ໃຫ້ແກ່ເຈົ້າຂອງວິສາຫະກິດ ຫຼື ພະນັກງານ.

### ມາດຕາ 6 ຂັ້ນຕອນການຍື່ນຄຳຮ້ອງ

ການຍື່ນຄຳຮ້ອງຂໍດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ຍື່ນຄຳຮ້ອງທີ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຢູ່ກົມຊັບສິນທາງປັນຍາ;
2. ກົມຊັບສິນທາງປັນຍາ ຕ້ອງຮັບເອົາຄຳຮ້ອງ, ອອກ ໃບຮັບຄຳຮ້ອງ, ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

### ມາດຕາ 7 ການພິຈາລະນາອອກໃບອະນຸຍາດ

ກົມຊັບສິນທາງປັນຍາ ຕ້ອງຄົ້ນຄວ້າພິຈາລະນາອອກໃບອະນຸຍາດ ໂດຍອີງໃສ່ເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ 5 ວັນລັດຖະການ ນັບຕັ້ງແຕ່ວັນທີ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີ ເອກະສານ ບໍ່ຖືກຕ້ອງ, ບໍ່ຊັດເຈນ ຫຼື ບໍ່ຈະແຈ້ງ, ກົມຊັບສິນທາງປັນຍາ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ 3 ວັນລັດຖະການ ແລະ ຜູ້ຍື່ນຄາຮ້ອງ ຕ້ອງສະໜອງເອກະສານເພີ່ມຕື່ມ ພາຍໃນ 10 ວັນ ນັບຕັ້ງແຕ່ວັນອອກແຈ້ງການເປັນຕົ້ນໄປ.

### ມາດຕາ 8 ອາຍຸຂອງໃບອະນຸຍາດ

ໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ມີອາຍຸ 2 ປີ ແລະ ສາມາດຕໍ່ອາຍຸໄດ້ເທື່ອລະ 2 ປີ.

### ມາດຕາ 9 ການຕໍ່ອາຍຸ ຫຼື ປ່ຽນແປງ

ການຕໍ່ອາຍຸ ຫຼື ການປ່ຽນແປງເນື້ອໃນ ຂອງໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ຕ້ອງປະກອບເອກະສານດັ່ງນີ້:

1. ໃບຄຳຮ້ອງຂໍຕໍ່ອາຍຸ ຫຼື ປ່ຽນແປງ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ສະບັບເກົ່າ;
3. ສຳເນົາໃບທະບຽນວິສາຫະກິດ (ຖ້າມີການປ່ຽນແປງ);
4. ສຳເນົາໃບອະນຸຍາດດຳເນີນທຸລະກິດທາງດ້ານກົດໝາຍ (ຖ້າມີການປ່ຽນແປງ).

### ມາດຕາ 10 ການໂຈະ ຫຼື ຖອນ ໃບອະນຸຍາດ

ບໍລິສັດຜູ້ຕາງໜ້າ ທີ່ສະໝັກໃຈ ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາຂອງຕົນ ສາມາດສະເໜີພ້ອມຊີ້ແຈງເຫດຜົນເປັນລາຍລັກອັກສອນ ໃຫ້ກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ພາຍໃນ 3 ວັນ ຫຼັງຈາກໄດ້ຮັບໜັງສືສະເໜີຈາກບໍລິສັດຜູ້ຕາງໜ້າ.

ພາຍຫຼັງໄດ້ຮັບແຈ້ງການ ໂຈະ ຫຼື ຖອນ ບໍລິສັດຜູ້ຕາງໜ້າຈະຕ້ອງຢຸດຕິການເຄື່ອນໄຫວບໍລິການທັນທີ.

## ໝວດທີ 3
## ການຄຸ້ມຄອງ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ

**ມາດຕາ 11 ອົງການຄຸ້ມຄອງ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນຜູ້ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງ ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ**

ກົມຊັບສິນທາງປັນຍາມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ອອກ, ຕໍ່, ປ່ຽນແປງ, ຖອນ ແລະ ໂຈະ ໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ;
2. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂອງບໍລິສັດຜູ້ຕາງໜ້າໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ກ່າວເຕືອນ, ສຶກສາອົບຮົມ ຕໍ່ບໍລິສັດຜູ້ຕາງໜ້າທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ ອື່ນທີ່ກ່ຽວຂ້ອງ;
4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ສົ່ງເສີມ ບໍລິສັດຜູ້ຕາງໜ້າ;
2. ປະສານງານກັບພະແນກການທີ່ກ່ຽວຂ້ອງ;
3. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງບໍລິສັດຜູ້ຕາງໜ້າ**

1. ໃຫ້ຄຳປຶກສາ, ໃຫ້ບໍລິການ ຕາງໜ້າຍື່ນ ຄຳຮ້ອງຂໍຈົດທະບຽນ, ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ຫຼື ດຳເນີນການອື່ນ ນຳກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
2. ດຳເນີນການ ຍື່ນເອກະສານໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມເງື່ອນໄຂ ແລະ ເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3. ຮັບປະກັນການບໍລິການໃຫ້ມີ ຄຸນະພາບ, ໂປ່ງໃສ, ຍຸຕິທຳ, ຈັນຍາບັນ ແລະ ຄວາມຮັບຜິດຊອບຕໍ່ໜ້າກົດໝາຍ;
4. ເກັບຮັກສາຂໍ້ມູນ ແລະ ເອກະສານຕ່າງໆ ຂອງເຈົ້າຂອງສິດຊັບສິນທາງປັນຍາ;

5. ເປັນໃຈກາງປະສານງານ ລະຫວ່າງ ກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ເຈົ້າຂອງສິດຊັບສິນທາງປັນຍາ;
6. ຮັກສາສິດ ແລະ ຜົນປະໂຫຍດຂອງເຈົ້າຂອງສິດຊັບສິນທາງປັນຍາ;
7. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 15 ຂໍ້ຫ້າມສໍາລັບພະນັກງານຄຸ້ມຄອງ

ຫ້າມພະນັກງານຄຸ້ມຄອງໃນການອະນຸຍາດດໍາເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາມີ ພຶດຕິກໍາ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ;
2. ສວຍໃຊ້ໜ້າທີ່ ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງເຈົ້າຂອງສິດຊັບສິນທາງປັນຍາ;
4. ເປັນພະນັກງານຂອງບໍລິສັດຜູ້ຕາງໜ້າ;
5. ພຶດຕິກໍາອື່ນທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 16 ຂໍ້ຫ້າມສໍາລັບບໍລິສັດຜູ້ຕາງໜ້າ

ຫ້າມບໍລິສັດຜູ້ຕາງໜ້າ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດທີ່ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ບໍ່ໄດ້ຮັບອະນຸຍາດຈາກກົມຊັບສິນ ທາງປັນຍາ;
2. ອະນຸຍາດ ໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນໃບອະນຸຍາດດໍາເນີນທຸລະກິດບໍລິການຈົດທະບຽນຊັບສິນທາງ ປັນຍາ;
3. ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດເປັນຜູ້ຕາງໜ້າຊັບສິນທາງປັນຍາທີ່ໝົດອາຍຸ;
4. ປອມແປງ ຫຼື ສະໜອງ ເອກະສານ, ຂໍ້ມູນ, ຫຼັກຖານ, ຄໍາຊີ້ແຈງ, ຄໍາໂຕ້ແຍ້ງທີ່ບໍ່ຖືກຕ້ອງ;
5. ເປັນຜູ້ຕາງໜ້າໃຫ້ແກ່ຄູ່ກໍລະນີທີ່ມີຂໍ້ຂັດແຍ່ງກັບເຈົ້າຂອງສິດຊັບສິນທາງປັນຍາທີ່ຕົນເອງໃຫ້ບໍລິການຢູ່;
6. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍ ຫຼື ໃຊ້ອໍານາດການຕະຫຼາດທີ່ບໍ່ເປັນທໍາຕໍ່ຜູ້ປະກອບ ການອື່ນ;
7. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຊ້ບໍລິການໃຫ້ເປັນຜູ້ຕາງໜ້າດໍາເນີນການຊັບສິນທາງປັນຍາ ໂດຍ ບໍ່ໄດ້ຮັບອະນຸຍາດ;
8. ວ່າຈ້າງພະນັກງານຄຸ້ມຄອງທີ່ເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຢູ່ ສປປ ລາວ ເປັນພະນັກງານຂອງ ບໍລິສັດຜູ້ຕາງໜ້າ;
9. ມີພຶດຕິກໍາອື່ນທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 17 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ດຳເນີນງານຢ່າງມີຄຸນະພາບ, ຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

### ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

### ມາດຕາ 19 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ປະຕິບັດວິໄນ ໃນກໍລະນີ ດັ່ງນີ້:

1. ພະນັກງານຄຸ້ມຄອງ ສ້າງຄວາມຫຍຸ້ງຍາກ, ຊັກຊ້າ, ກົດໜ່ວງຖ່ວງດຶງ ໃນການພິຈາລະນາຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດເປັນຜູ້ຕາງໜ້າ ໂດຍບໍ່ສົມເຫດສົມຜົນ;
2. ບໍລິສັດຜູ້ຕາງໜ້າ ບໍ່ເປັນໃຈການປະສານງານ ລະຫວ່າງ ກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ເຈົ້າຂອງສິດຊັບສິນທາງປັນຍາ ຫຼື ລະເມີດຂໍ້ຫ້າມໃນສະຖານເບົາ;
3. ບໍລິສັດຜູ້ຕາງໜ້າ ບໍ່ປະຕິບັດຕາມເງື່ອນໄຂ ແລະ ເວລາທີ່ໄດ້ກຳນົດໄວ້ ເປັນຄັ້ງທຳອິດ;
4. ບໍລິສັດຜູ້ຕາງໜ້າໃຫ້ບໍລິການ ບໍ່ມີຄຸນະພາບ ແລະ ບໍ່ໂປ່ງໃສ.

### ມາດຕາ 20 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ພ້ອມທັງ ຮັບຜິດຊອບຕໍ່ໜ້າກົດໝາຍ ດັ່ງນີ້:

1. ດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະຖືກປັບໃໝ ຊາວລ້ານ (20.000.000) ກີບ;
2. ອະນຸຍາດໃຫ້ຜູ້ອື່ນ ນຳໃຊ້, ເຊົ່າ ຫຼື ໂອນໃບອະນຸຍາດດຳເນີນທຸລະກິດເປັນຜູ້ຕາງໜ້າ ຈະຖືກປັບໃໝ ຫ້າສິບລ້ານ (50.000.000) ກີບ;
3. ປອມແປງ ຫຼື ສະໜອງເອກະສານ, ຂໍ້ມູນ, ຫຼັກຖານ, ຄຳຊີ້ແຈງ, ຄຳໂຕ້ແຍ້ງທີ່ບໍ່ຖືກຕ້ອງ, ບໍ່ໃຫ້ຄວາມຮ່ວມມືກັບອົງການຄຸ້ມຄອງ ຈະຖືກປັບໃໝ ຫ້າສິບລ້ານ (50.000.000) ກີບ,;
4. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ບໍລິສັດຜູ້ຕາງໜ້າອື່ນ ຈະຖືກປັບໃໝ ຫ້າສິບລ້ານ 50.000.000) ກີບ;

5. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຊ້ບໍລິການໃຫ້ເປັນຜູ້ຕາງໜ້າດຳເນີນການຊັບສິນທາງປັນຍາ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຕາມມູນຄ່າຄວາມເສຍຫາຍຕົວຈິງຂອງເຈົ້າຂອງສິດຊັບສິນທາງປັນຍາ;
6. ນຳໃຊ້ໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາທີ່ໝົດອາຍຸ ຈະຖືກປັບໃໝ ໜຶ່ງລ້ານແປດແສນກີບ (1.800.000) ກີບ ແລະ ຖ້າພາຍຫຼັງວັນທີໝົດອາຍຸຫົກສິບ (60) ວັນ ແມ່ນໃຫ້ຍື່ນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດເປັນຜູ້ຕາງໜ້າຄືນໃໝ່.

**ມາດຕາ 21 ມາດຕະການ ໂຈະ ແລະ ຖອນໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ຕ້ອງໂຈະ ການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ໃນກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງສະບັບນີ້;
2. ຖືກປັບໃໝຕາມມາດຕາ 20 ຂອງຂໍ້ຕົກລົງສະບັບນີ້ສອງ (2) ຄັ້ງ.

ກົມຊັບສິນທາງປັນຍາ ຕ້ອງຖອນໃບອະນຸຍາດດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ໃນກໍລະນີ ດັ່ງນີ້:

1. ຖືກໂຈະການດຳເນີນທຸລະກິດບໍລິການຈົດທະບຽນຊັບສິນທາງປັນຍາ ແຕ່ບໍ່ມີການປັບປຸງຕາມເງື່ອນໄຂກຳນົດ;
2. ໃນກໍລະນີ ໃບທະບຽນວິສາຫະກິດ ຖືກຖອນ;
3. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຊັບສິນທາງປັນຍາ, ກະຊວງ ອຸດສາຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ເມື່ອໄດ້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນ ຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**